# ການຊ່ວຍເຫຼືອຄູຢ່າງຕໍ່ເນື່ອງ

## ຖ້າຄູຕ້ອງການຄວາມຊ່ວຍເຫຼືອ ຄວນເຮັດແນວໃດ?

- ຂໍຄວາມຊ່ວຍເຫຼືອ ຫຼື ຄຳແນະນຳ, ບໍ່ຄວນລະເລີຍບັນຫາຂອງທ່ານ
- ໃຫ້ຄູທ່ານອື່ນຊ່ວຍສາທິດເຕັກນິກໃຫ້ເບິ່ງ
- ແຕ່ງບົດສອນຮ່ວມກັບຄູທ່ານອື່ນ
- ສອນຮ່ວມກັບຄູທ່ານອື່ນ
- ສັງເກດເວລາຄູທ່ານອື່ນສອນ
- ໃຫ້ຄູທ່ານອື່ນສັງເກດການສອນຂອງທ່ານ ແລ້ວໃຫ້ຄຳເຫັນ
- ທົບທວນຄູ່ມືຝຶກອົບຮົມຄືນ
- ແລກປ່ຽນຜົນງານ ແລະ ຜົນສຳເລັດຂອງທ່ານ

## ຄູສາມາດຂໍຄວາມຊ່ວຍເຫຼືອຈາກໃຜໄດ້ແດ່?

- ຜູ້ທຳອິດ ແມ່ນຜູ້ອຳນວຍການໂຮງຮຽນຂອງທ່ານ
- ຄູທີ່ຖືກຈັບຄູ່ກັບທ່ານ
- ຄູທ່ານອື່ນ ທີ່ສອນຢູ່ໂຮງຮຽນດຽວກັນກັບທ່ານ
- ຄູສອນຂັ້ນ ປ.1 ຢູ່ເມືອງຂອງທ່ານ
- ຄູສຶກສານິເທດ
- ຄູຝຶກປະຈຳແຂວງ

# ສື່ການຮຽນການສອນ ທີ່ຄູຈະໄດ້ຮັບ

### ສຳລັບຄູ

- ຊຸດປຶ້ມຄູ່ມືຄູ 7 ຫົວ
- ປຶ້ມແບບຮຽນ 4 ຫົວ
- ຄູ່ມືຝຶກອົບຮົມ 1 ຫົວ

### ສຳລັບຫ້ອງຮຽນ ຂັ້ນ ປ. 1

- ຊຸດປຶ້ມແບບຮຽນ 4 ຫົວຕໍ່ນັກຮຽນ 1 ຄົນ
- ຊຸດອຸປະກອນສຳລັບຄູ 1 ຊຸດ ຕໍ່ 1 ຫ້ອງຮຽນ
- ຊຸດປຶ້ມຂໍ້ມູນນ້ອຍສຳລັບຜູ້ປົກຄອງ 1 ຊຸດ

ຖ້າທ່ານບໍ່ໄດ້ຮັບສື່ການຮຽນການສອນເຫຼົ່ານີ້, ກະລຸນາຖາມຜູ້ອຳນວຍການໂຮງຮຽນຂອງທ່ານ

# ຄຳຄິດເຫັນຈາກຄູຝຶກ ແລະ ຄູສອນ

**"ເຕັກນິກການຟັງ ແລະ ການເວົ້າແບບໃໝ່ແມ່ນດີຫຼາຍ. ຖ້າເຮົາພານັກຮຽນເວົ້າຕາມຫຼັງ, ພວກເຂົາກໍຈະຝຶກຊ້ອມ ແລະ ຈື່ໄດ້. ຖ້າພວກເຂົາຈື່ສຽງໄດ້, ພວກເຂົາກໍຈະສາມາດຂຽນໄດ້"**

ທ່ານນາງ ອິນທະຫວາ, ຄູສອນ, ໂຮງຮຽນປະຖົມສຸນັນທາ, ແຂວງສະຫວັນນະເຂດ

**"ປຶ້ມເລື່ອງແມ່ນສື່ການຮຽນທີ່ດີຫຼາຍສຳລັບເດັກນ້ອຍນັກຮຽນ"**

ທ່ານນາງ ຈິດແກ້ວ ອິນທະວົງ, ຄູສອນ
ໂຮງຮຽນປະຖົມນ້ຳຈາງ, ແຂວງຫຼວງນ້ຳທາ

**"ປຶ້ມແບບຮຽນມີຄວາມຈະແຈ້ງຂຶ້ນ, ມີສີສັນຫຼາຍຂຶ້ນ ເຮັດໃຫ້ບົດຮຽນມີຄວາມໜ້າສົນໃຈຫຼາຍຂຶ້ນສຳລັບເດັກນ້ອຍ"**

ທ່ານນາງ ຄຳໝັ້ນ ມະໂນເລີດ, ຮອງຜູ້ອຳນວຍການໂຮງຮຽນ
ໂຮງຮຽນປະຖົມທາດອິງຮັງ, ແຂວງສະຫວັນນະເຂດ

**"ປຶ້ມຄູ່ມືຄູສະບັບປັບປຸງໃໝ່ມີຄຳແນະນຳ ກ່ຽວກັບ ການແຕ່ງບົດສອນຕາມວິທີການສອນແບບໃໝ່ ແລະ ວິທີສ້າງເຄື່ອງມືທີ່ຈຳເປັນ ທີ່ເປັນປະໂຫຍດສຳລັບຄູ ແລະ ກໍນຳໃຊ້ງ່າຍ"**

ທ່ານ ເມີງຄຳ ແກ້ວພູວົງ, ຄູຝຶກຫຼັກແຫຼ່ງ
ວິທະຍາໄລຄູແຂວງຫຼວງນ້ຳທາ

**"ບົດຮຽນຈະມີການໂຕ້ຕອບກັນຫຼາຍຂຶ້ນ, ຊຶ່ງເປັນວິທີທີ່ດີສຳລັບການຮຽນ ແລະ ການຈື່ຈຳ. ເດັກຈະໄດ້ຮຽນໂດຍການປະຕິບັດຕົວຈິງ"**

ທ່ານນາງ ຈັນຄຳ ລໍຫວັນກູ່, ຄູຝຶກປະຈຳແຂວງ,
ຫ້ອງການສຶກສາທິການ ແລະ ກິລາເມືອງຫຼວງນ້ຳທາ

*ແຜນງານບົດວາແມ່ນແຜນງານທີ່ນຳພາໂດຍລັດຖະບານແຫ່ງ ສປປ ລາວ,*
*ໂດຍການສະໜັບສະໜູນຈາກລັດຖະບານ ອົດສະຕຣາລີ ແລະ ສະຫະພາບເອີຣົບ*

ສຳລັບຄູຂັ້ນ ປ.1

# ຫຼັກສູດຊັ້ນປະຖົມສຶກສາ ສະບັບປັບປຸງໃໝ່



**ຊ່ວຍປັບປຸງຜົນການຮຽນສຳລັບເດັກຍິງ ແລະ ເດັກຊາຍໃຫ້ດີຂຶ້ນ**

# ຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່

ການນໍາໃຊ້ຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່ ໃນທຸກໂຮງຮຽນປະຖົມທົ່ວປະເທດ ຈະເລີ່ມໃນເດືອນກັນຍາ 2019 ໃນຂັ້ນ ປ.1 ແລະ ສິ້ນສຸດໃນປີ 2024 ໃນຂັ້ນ ປ.5.

ການນໍາໃຊ້ຫຼັກສູດສະບັບປັບປຸງໃໝ່ ຈະປະກອບສໍາຄັນສ່ວນເຂົ້າໃນການປັບປຸງຜົນການຮຽນສໍາລັບເດັກ ແລະ ເພີ່ມທັກສະ ແລະ ຄວາມຮູ້ສໍາລັບການຮຽນ ແລະ ການເຮັດວຽກໃນອະນາຄົດ.

ຄູແມ່ນຜູ້ຈັດຕັ້ງປະຕິບັດທີ່ສໍາຄັນໃນການປ່ຽນແປງນີ້. ການປ່ຽນແປງດັ່ງກ່າວແມ່ນການນໍາໃຊ້ຫຼັກສູດສະບັບປັບປຸງໃໝ່ ໃນການສອນນັກຮຽນ ໂດຍການນໍາໃຊ້ວິທີການສອນຮູບແບບໃໝ່.

**ການທົດລອງ**

- ນັກຮຽນຈໍານວນ **632** ຄົນ ໄດ້ທົດລອງນໍາໃຊ້ຫຼັກສູດຂັ້ນ ປ.1
- ຄູຝຶກ ແລະ ຄູສອນ ຈໍານວນ **ຫຼາຍກວ່າ 100** ທ່ານ ໄດ້ທົດລອງນໍາໃຊ້ສື່ການຮຽນການສອນ

**ຂອບເຂດ**

- ໂຮງຮຽນປະຖົມຂອງລັດ **8.604** ແຫ່ງ
- ຊັ້ນປະຖົມສຶກສາທັງ **5 ຂັ້ນ** ຈະໄດ້ຮັບການປັບປຸງ ປີລະຂັ້ນ
- ນັກຮຽນຂັ້ນ ປ.1 ຈໍານວນ **162.342** ຄົນ ຈະເລີ່ມຮຽນຫຼັກສູດສະບັບປັບປຸງໃໝ່ ໃນເດືອນກັນຍາ 2019

**ການຝຶກອົບຮົມ**

- ຄູຝຶກຫຼັກແຫຼ່ງ **60** ທ່ານ
- ຄູຝຶກປະຈໍາແຂວງ **611** ທ່ານ
- ຄູສອນຂັ້ນ ປ.1 ໄດ້ຮັບການຝຶກອົບຮົມ **8.747** ທ່ານ
- ອໍານວຍການໂຮງຮຽນ ແລະ ຄູນິເທດ ໄດ້ຮັບການຝຶກອົບຮົມ **6.800** ທ່ານ

**ສື່ການຮຽນການສອນ**

- ນັກຮຽນຂັ້ນ ປ.1 ທຸກຄົນ ຈະໄດ້ຮັບ**ປຶ້ມແບບຮຽນ 4 ຫົວ**
- ຄູສອນຂັ້ນ ປ.1 ທຸກຄົນ ຈະໄດ້ຮັບ**ປຶ້ມຄູ່ມືຄູ 7 ຫົວ**
- ຫ້ອງຮຽນ ຂັ້ນ ປ.1 ທຸກຫ້ອງ ຈະໄດ້ຮັບ**ປຶ້ມນິທານ** 1 ຊຸດ
- ຫ້ອງຮຽນ ຂັ້ນ ປ.1 ທຸກຫ້ອງ ຈະໄດ້ຮັບ**ຊຸດປຶ້ມອ່ານເສີມທີ່ເໝາະສົມຕາມຂັ້ນຮຽນ**
- ຫ້ອງຮຽນ ຂັ້ນ ປ.1 ທຸກຫ້ອງຈະໄດ້ຮັບ**ຊຸດອຸປະກອນສໍາລັບຄູ 1 ຊຸດ**

# ເຄັດລັບ 11 ຂໍ້ ໃນການຈັດຕັ້ງປະຕິບັດຫຼັກສູດສະບັບປັບປຸງໃໝ່

**ຄູຄວນເຮັດແນວໃດຫຼັງຈາກຝຶກອົບຮົມແລ້ວ?**

**ອ່ານ ແລະ ທໍາຄວາມເຂົ້າໃຈ**
ທຸກສື່ການຝຶກອົບຮົມ, ຄູ່ມືຄູ ແລະ ປຶ້ມແບບຮຽນ ກ່ອນເລີ່ມເປີດສົກຮຽນ

**ປະດັບປະດາຫ້ອງຮຽນ**
ດ້ວຍໂປສະເຕີ ແລະ ເພີ່ມສີສັນ ເພື່ອເຮັດໃຫ້ຫ້ອງຮຽນໜ້າສົນໃຈ ແລະ ມີສ່ວນຮ່ວມ

**ກະກຽມປຶ້ມຂຽນ**
ສໍາລັບແຕ່ລະວິຊາ ເພື່ອບັນທຶກການປະເມີນການວາງເກນຄະແນນຢ່າງລະອຽດ

**ນໍາໃຊ້ຄູ່ມືຄູ**ໃນການແຕ່ງບົດສອນ, ບໍ່ແມ່ນຈະນໍາໃຊ້ປຶ້ມແບບຮຽນແຕ່ຢ່າງດຽວ

**ແລກປ່ຽນຢ່າງເປັນປະຈໍາ**
ກ່ຽວກັບປະສົບການ ແລະ ແນວຄວາມຄິດຕ່າງໆ ກັບເພື່ອນຮ່ວມງານຂອງທ່ານ ແລະ ຜູ້ອໍານວຍການໂຮງຮຽນ

**ເບິ່ງວິດີໂອຝຶກອົບຮົມຄູ**
ເພື່ອພັດທະນາເຕັກນິກການສອນຂອງທ່ານ

**ກວດເບິ່ງສື່ການຮຽນການສອນ**
ທີ່ທ່ານມີຢູ່ໂຮງຮຽນແລ້ວ ແລະ ສື່ທີ່ທ່ານຕ້ອງໄດ້ສ້າງໃໝ່

**ຈັດຫ້ອງຮຽນ**ໃນຮູບແບບການສົ່ງເສີມເດັກໃຫ້ມີສ່ວນຮ່ວມໃນການຮຽນ ແລະ ຮຽນຮ່ວມກັນ

**ສືບຕໍ່ຮຽນດ້ວຍຕົວເອງ**
ດ້ວຍກິດຈະກໍາຕ່າງໆ ຕະຫຼອດປີ

**ເລີ່ມການວາງແຜນ**
ສໍາລັບອາທິດແນະນໍາເບື້ອງຕົ້ນ ຕັ້ງແຕ່ມື້ນີ້ ຮ່ວມກັບຜູ້ອໍານວຍການໂຮງຮຽນ

**ຮ່ວມກັບຜູ້ອໍານວຍການໂຮງຮຽນ**ໃນການຈັດຕັ້ງງານເປີດສົກຮຽນໃໝ່ຂອງໂຮງຮຽນປະຖົມ ສໍາລັບຜູ້ປົກຄອງ ແລະ ນັກຮຽນຂັ້ນ ປ. 1

ສະແກນທີ່ນີ້
ເພື່ອເບິ່ງວິດີໂອ

# ຄໍາຖາມ ແລະ ຄໍາຕອບໃຫ້ແກ່ຜູ້ປົກຄອງ

### ເປັນຫຍັງຫ້ອງຮຽນຈຶ່ງມີສຽງດັງ?
### ເປັນຫຍັງນັກຮຽນບໍ່ນັ່ງເປັນແຖວ?
### ເປັນຫຍັງເດັກນ້ອຍຈຶ່ງຫຼິ້ນເກມໃນຫ້ອງ?

ນັກຮຽນຈະໄດ້ຮຽນຫຼາຍຂຶ້ນ ແລະ ດີຂຶ້ນ ເມື່ອສະໝອງມີຄວາມຕື່ນຕົວ ເຊິ່ງມັນຈະເກີດຂຶ້ນເມື່ອນັກຮຽນຕັ້ງໃຈເຮັດສິ່ງໃດໜຶ່ງ ແທນທີ່ຈະຟັງຕາມຄູເວົ້າ ຫຼື ເບິ່ງປຶ້ມແບບຮຽນຢ່າງດຽວ. ສະໝອງຂອງນັກຮຽນສາມາດຮຽນໄດ້ດີ ໂດຍຜ່ານການເຮັດກິດຈະກໍາທີ່ນັກຮຽນນໍາໃຊ້ຂໍ້ມູນ ແລະ ທັກສະໃໝ່ ເຊັ່ນ: ການຮຽນ ຫຼື ຫຼິ້ນເກມເປັນຄູ່ ຫຼື ເປັນກຸ່ມ. ຫ້ອງຮຽນທີ່ມີຊີວິດຊີວາແມ່ນຫ້ອງຮຽນທີ່ນັກຮຽນຮຽນໄດ້ດີ ຍ້ອນນັກຮຽນມີແຮງຈູງໃຈໃນການຮຽນ, ມີຄວາມຕັ້ງໃຈ ແລະ ມີສ່ວນຮ່ວມ.

### ເປັນຫຍັງຈຶ່ງມີການສອບເສັງເດັກນ້ອຍໜ້ອຍລົງ?

ການປະເມີນນັກຮຽນບໍ່ແມ່ນພຽງແຕ່ເບິ່ງວ່າໃຜເຮັດໄດ້ດີທີ່ສຸດແລ້ວໃຫ້ຄະແນນຜູ້ນັ້ນ. ແຕ່ແມ່ນການເບິ່ງວ່ານັກຮຽນເຂົ້າໃຈຫຍັງແດ່ ແລະ ພວກເຂົາຕ້ອງການການຊ່ວຍເຫຼືອ ຫຼື ບໍ່. ຫຼັກສູດສະບັບປັບປຸງໃໝ່ ຈະເຮັດໃຫ້ຄູສາມາດປະເມີນນັກຮຽນໄດ້ ໂດຍຜ່ານການຖາມຄໍາຖາມ ແລະ ການສັງເກດເບິ່ງພວກເຂົາປະພຶດ ແທນທີ່ຈະສອບເສັງຫຼາຍເກີນໄປ.

### ພໍ່ແມ່/ຜູ້ປົກຄອງນັກຮຽນຈະສາມາດສົ່ງເສີມການສຶກສາຂອງລູກຫຼານໄດ້ຄືແນວໃດ?

ການຊ່ວຍເຫຼືອຈາກພໍ່ແມ່ເປັນສິ່ງສໍາຄັນສໍາລັບເດັກ ໃຫ້ປະສົບຜົນສໍາເລັດຢູ່ໂຮງຮຽນ. ຜູ້ປົກຄອງສາມາດໃຫ້ການຊ່ວຍເຫຼືອການຮຽນຂອງເດັກໄດ້ງ່າຍໆ ເຊັ່ນ: ຖາມວ່າລູກຮຽນມື້ນີ້ເປັນແນວໃດ, ພົບປະ ແລະ ໂອ້ລົມກັບຄູຂອງເດັກ, ຮັບປະກັນວ່າເດັກມີອຸປະກອນການຮຽນທີ່ຈໍາເປັນໃນໂຮງຮຽນຄົບຖ້ວນ ແລະ ອ່ານປຶ້ມກັບເດັກຢູ່ເຮືອນ.

ຜູ້ປົກຄອງທຸກທ່ານຈະໄດ້ຮັບປຶ້ມຂໍ້ມູນນ້ອຍ ທີ່ຜູ້ອໍານວຍການໂຮງຮຽນຈະແຈກຢາຍຕອນເປີດສົກຮຽນໃໝ່. ແນະນໍາໃຫ້ຜູ້ປົກຄອງເບິ່ງວິທີຊ່ວຍເຫຼືອລູກຫຼານໃນການຮຽນເພີ່ມເຕີມ ຕາມຄໍາແນະນໍາຕ່າງໆຢູ່ປຶ້ມດັ່ງກ່າວ.